ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 25 ຫາ 29 ມີນາ 2024



ຄວາມຄືບໜ້າຂອງໂຄງການຊົນລະກະເສດ ແລະ ຊົນນະບົດຮອບດ້ານ ແຂວງສະຫວັນນະເຂດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ທ່ານຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ລົງຢ້ຽມຢາມຄວາມຄືບໜ້າຂອງໂຄງການຊົນລະກະເສດ ແລະ ຊົນນະບົດຮອບດ້ານ ແຂວງສະຫວັນນະເຂດ

ໃນວັນທີ 27 ມີນາ 2024 ນີ້ ທ່ານ ທອງພັດ ວົງມະນີ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະໄດ້ລົງຢ້ຽມຢາມ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໂຄງການພັດທະນາຊົນລະກະເສດ ແລະ ຊົນນະບົດຮອບດ້ານ, ເມືອງສອງຄອນ ແລະ ເມືອງ ຈຳພອນ, ແຂວງ ສະຫວັນນະເຂດ ໂດຍໄດ້ລົງຢ້ຽມຢາມພື້ນທີ່ໂຮງສີເຂົ້າທັນສະໄໝ, ຫົວງານຈັກສູບນ້ຳ ແລະ ພື້ນທີກໍ່ສ້າງນາໄຮໃຫຍ່ ທີ່ນອນໃນພື້ນທີ່ຂອງໂຄງການ.

ທ່ານ ສັດທາເທບ ທຳມະຈັກ ຫົວໜ້າໂຄງການພັດທະນາຊົນລະກະເສດ ແລະ ຊົນນະບົດຮອບດ້ານ ໄດ້ລາຍງານໃຫ້ຮູ້ວ່າ ໂຄງການດັ່ງກ່າວນີ້ແມ່ນໄດ້ຮັບທຶນກູ້ຢືມດອກເບ້ຍ ຜ່ອນຜັນ ຈາກ ກອງທຶນ EDCF, Korea Exim Bank ສ.ເກົາຫຼີ ມູນຄ່າ 46 ລ້ານໂດລາ. ກົມຊົນລະປະທານ ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າຂອງໂຄງການ, ໂດຍແມ່ນບໍລິສັດ ຮ່ວມດາຊານ-ໂຍຊິນ ສ.ເກົາຫຼີ ເປັນທີ່ປຶກສາໂຄງການ, ບໍລິສັດ ຮັບເໝົາກໍ່ສ້າງຮ່ວມ ອຶ່ງວຊຸງ-ດົງບູ ສ.ເກົາຫຼີ ເປັນຜູ້ຮັບເໝົາກໍ່ສ້າງ ແລະ ໂຄງການດັ່ງກ່າວ ມີມູນຄ່າກໍ່ສ້າງ 30.817.140,10 ລ້ານໂດລາ. ໄລຍະເວລາຈັດຕັ້ງປະຕິບັດ ການກໍ່ສ້າງໂຄງການ 36 ເດືອນແຕ່ປີ 2020 ຫາ 2024. ສຳລັບກິດຈະກຳຫຼັກຂອງໂຄງການແມ່ນຟື້ນຟູປັບປຸງອ່າງເກັບນ້ຳສຸຍ 6 ປະຕູ, ຟື້ນຟູລະບົບຫົວ ງານຈັກສູບນ້ຳ 2 ແຫ່ງ, ກໍ່ສ້າງລະບົບສົ່ງນ້ຳ ພ້ອມດ້ວຍອາຄານຕາມຄອງເໝືອງ ຍາວ 22,3 ກິໂລແມັດ, ມີການກໍ່ສ້າງເສັ້ນທາງຂົນສົ່ງສິນຄ້າກະສິກຳ ຍາວ 55,4 ກິໂລແມັດ, ບຸກເບີກເປັນພື້ນທີ່ນາໄຮ່ ໃຫຍ່ ເນື້ອທີ່ 105 ເຮັກຕາ, ຈະມີການປັບປຸງເສັ້ນທາງຊົນນະບົດຍາວ 3.4 ກິໂລແມັດ, ກໍ່ສ້າງສູນພັດທະນາເຕັກນິກກະສິກຳຊຸມຊົນ 2 ແຫ່ງ, ພ້ອມນີ້ ກໍຈະກໍ່ສ້າງໂຮງສີເຂົ້າທັນສະໄໝ 1 ແຫ່ງ ສາມາດສີເຂົ້າໄດ້ 5 ໂຕນຕໍ່

ຊົ່ວໂມງ. ໂດຍຄາດວ່າການກໍ່ສ້າງແມ່ນຈະສຳເລັດທັງໝົດຂອງໂຄງການ ແລະ ໃຫ້ໄດ້ເປີດການທົດລອງນຳໃຊ້ປີນີ້ ໂດຍສະເພາະແມ່ນຫົວງານຈັກສູບນ້ຳລະຫານ້ຳ ຈະເປີດທົດລອງນຳໃຊ້ ຕົ້ນເດືອນພຶດສະພາ 2024 ແລະ ຈະສາມາດສະໜອງນ້ຳໃນການເຮັດນາລະດູນາແຊງປີ 2025 ແລະ ຍັງມີບາງງົບປະມານຈຳນວນໜຶ່ງເພື່ອສືບຕໍ່ກໍ່ສ້າງວຽກທີ່ຍັງເຫຼືອ ໂດຍສະເພາະແມ່ນການກໍ່ສ້າງຄອງເໝືອງຂັ້ນສອງ ແລະ ຂັ້ນສາມເພື່ອໃຫ້ສາມາດສະໜອງນ້ຳໃຫ້ສະດວກຂຶ້ນຕື່ມ ເຊິ່ງ ພາຍຫຼັງສຳເລັດການກໍ່ສ້າງສຳເລັດ ປະຊາຊົນ ຈຳນວນ 13 ບ້ານ ກວມເອົາ 1.879 ຄອບຄົວ ຂອງ ເມືອງຈຳພອນ ແລະ ເມືອງສອງຄອນ, ແຂວງສະຫວັນນະເຂດ ຈະໄດ້ຮັບການສະໜອງນ້ຳໃນເນື້ອທີ່ປູກເຂົ້າໃນລະດູແລ້ງ 2.500 ເຮັກຕາ ແລະ ລະດູຝົນ 2.900 ເຮັກຕາ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປາໄມ;